ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງທົ່ງມີໄຊ
ຫ້ອງການກະສິກຳ ແລະ ປ່າໄມ້
ໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ

ເລກທີ:........../ຊກຂ
ເມືອງທົ່ງມີໄຊ, ວັນທີ:.....ພຶດສະພາ2022

## ແຈ້ງການ

ເຖິງ: ບັນດາຫົວໜ່ວຍທຸລະກິດກະສິກາ, ບໍລິສັດສົ່ງເສີມການຜະລິດກະສິກາເປັນສິນຄ້າ, ຜູ້ສະໜອງປັດໃຈການຜະລິດກະສິກາໃນຂອບເຂດເມືອງທົ່ງມີໄຊ

ເລື່ອງ: ການສະໝັກຂໍທຶນສົມທົບ ສໍາລັບ ພັດທະນາທຸລະກິດກະສິກໍາ ຈາກໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ

- ອີງຕາມແຈ້ງການຂອງໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍຂັ້ນສູນກາງ ສະບັບເລກທີ 151/ຈມ.ທຊ ລົງວັນທີ 25 ເມສາ ປີ 2022 ກ່ຽວກັບການກະກຽມຈັດຕັ້ງປະຕິບັດວຽກງານກອງທຶນສົມທົບ ສໍາລັບ ພັດທະນາທຸລະກິດກະສິກໍາ

ໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍເປັນໂຄງການສົ່ງເສີມການຜະລິດກະສິກໍາຂອງຄົວເຮືອນຂະໜາດນ້ອຍເພື່ອເປັນສິນຄ້າໂດຍມີການເຊື່ອມໂຍງກັບຕະຫຼາດ. ໂຄງການດັ່ງກ່າວມີຈຸດປະສົງເພື່ອປະກອບສ່ວນເຂົ້າໃນການປັບປຸງຊີວິດການເປັນຢູ່ໂດຍເລີ່ມຈາກການຜະລິດເພື່ອຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການໄປສູ່ການຜະລິດເປັນສິນຄ້າ. ກອງທຶນສົມທົບ ສໍາລັບ ພັດທະນາທຸລະກິດກະສິກໍາແມ່ນເປັນໜຶ່ງໃນບັນດາກົນໄກການຈັດຕັ້ງປະຕິບັດໂຄງການທີ່ມີເປົ້າໝາຍເພື່ອເຮັດໃຫ້ຕ່ອງໂສ້ມູນຄ່າຂອງກິດຈະກໍາທີ່ໂຄງການສະໜັບສະໜູນໄດ້ເຂົ້າເຖິງຕະຫຼາດໂດຍຜ່ານການຊ່ວຍເຫຼືອດ້ານວິຊາການ ແລະ ການເງິນໃຫ້ແກ່ຫົວໜ່ວຍທຸລະກິດກະສິກໍາທີ່ຕິດພັນກັບກຸ່ມກະສິກອນ ແລະ ຊຸມຊົນເປົ້າໝາຍຂອງໂຄງການ ເພື່ອຮັບປະກັນການເຂົ້າເຖິງຕະຫຼາດ, ການມີຕະຫຼາດຮອງຮັບທີ່ດີກວ່າເກົ່າ ແລະ ປັບປຸງການເຂົ້າເຖິງການບໍລິການຂອງພາກທຸລະກິດ.

ເພື່ອເປັນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ, ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງທົ່ງມີໄຊ ໃນນາມເປັນຈຸດໃຈກາງໃນການປະສານງານຂອງໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍປະຈໍາເມືອງທົ່ງມີໄຊ, ແຂວງໄຊຍະບູລີ ຂໍຖືເປັນກຽດແຈ້ງມາຍັງບັນດາຫົວໜ່ວຍທຸລະກິດກະສິກໍາທີ່ມີການສົ່ງເສີມການຜະລິດເປັນສິນຄ້າຊາບວ່າ ປັດຈຸບັນທາງໂຄງການໄດ້ມີການສະໜອງທຶນສົມທົບເພື່ອພັດທະນາທຸລະກິດກະສິກໍາເຊິ່ງບັນດາຫົວໜ່ວຍທຸລະກິດທີ່ມີຄວາມສົນໃຈສະໝັກຂໍທຶນແມ່ນສາມາດພົວພັນ ແລະ ຂໍຂໍ້ມູນລາຍລະອຽດ ກ່ຽວກັບ ຂັ້ນຕອນ ແລະ

**ເງື່ອນໄຂການສະໝັກຂໍທຶນໄດ້ທີ່ຫ້ອງ**ການປະສານງານໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດ **ນ້ອຍທີ່ຫ້ອງການກະສິກຳ** ແລະ ປ່າໄມ້ເມືອງ ໃນວັນ ແລະ ເວລາລັດຖະການ.

ຜູ້ປະສານງານໂຄງການຂັ້ນເມືອງ

ນ. ປານີ ວົງແກ້ວ